# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດທີ 24 ສິງຫາ 2008 ( 08-24-2008 )

---

## <u>ຊີວິດທີ່ມີຄວາມເຊື່ອໝັ້ນ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ເຮັບເຣີ 10:19-29, 32-36)

**<u>ຄຳຖາມແຫ່ງຊີວິດ:</u>** ເຮັດແນວໃດຂ້າພະເຈົ້າຈຶ່ງມີຄວາມໝັ້ນໃຈໃນຊີວິດຄຣິສຕຽນ?

**<u>ຄວາມຈິງໃນພຣະຄັມພີ:</u>** ຄຣິສຕຽນເຮົາສາມາດເປັນພຍານ ແລະນະມັສການດ້ວຍຄວາມໝັ້ນໃຈ ເພາະການຖວາຍຕົວຂອງພຣະຄຣິດເພື່ອພວກເຮົາ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ທ່ານຄົ້ນຫາຫົນທາງທີ່ດີທີ່ສຸດຈາກພຣະເຈົ້າໃນຊີວິດປະຈຳວັນຂອງທ່ານໂດຍ:

- ໃຫ້ເຂົ້າໃຈເຖິງຄວາມໝັ້ນໃຈວ່າ ທ່ານສາມາດນະມັສການ ແລະເປັນພຍານໄດ້ ແລະ
- ໃຫ້ຝຶກຝົນຄວາມໝັ້ນໃຈໃນຂນະທີ່ທ່ານນະມັສການ ແລະເປັນພຍານ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ນຳພານັກຮຽນໃຫ້ມີຄວາມສົນໃຈໃນ **ຊີວິດທີ່ດີທີ່ສຸດ** ໃຫ້ບອກກັບນັກຮຽນວ່າການສຶກສາພຣະທັມເຮັບເຣີເຮັດໃຫ້ຜູ້ເຊື່ອທັງຫລາຍໄດ້ຈົດຈໍ່ຢູ່ໃນຄຳສັ່ງສອນຂອງພຣະເຢຊູຄຣິດ, ໃຫ້ຮູ້ຈັກຄຸນຄ່າຂອງຊີວິດ. ໃນອາທິດນີ້ເຂົາເຈົ້າຈະໄດ້ຮຽນວ່າ ເຮັດແນວໃດຈຶ່ງຈະມີຄວາມເຊື່ອໝັ້ນໃນການດຳເນີນຊີວິດຄຣິສຕຽນຂອງເຂົາເຈົ້າ.
- ໃນບໍ່ນານເທົ່າໃດມານີ້, ທ່ານວິລລຽມ ແຄຣີ ເປັນມິດຊັນນາຣີບັບຕິສໃນປະເທດອິນເດັຽ ທ່ານໄດ້ປະເຊີນກັບຄວາມລຳບາກ ທົນທຸກທໍຣະມານຫລາຍຢ່າງ, ຊຶ່ງທາງໂບດມີຄວາມເຊື່ອຖື ແລະໄດ້ສົ່ງລາວອອກໄປເພື່ອປະກາດຕາມສະຖານທີ່ຕ່າງໆ ຫລັງຈາກລາວໄປຮອດປະເທດອິນເດັຽ ລາວກໍຍັງບໍ່ສາມາດປະກາດດ້ວຍ

ຄວາມເຊື່ອຢ່າງເປັນທາງການໄດ້. ທ່ານກໍເຊັ່ນດຽວກັນທ່ານສາມາດເຮັດຄືອັດສາວົກໂປໂລ ແລະທ່ານ ວິລລຽມ ແຄຣີໄດ້ ດ້ວຍຄວາມໝັ້ນໃຈໃນຊີວິດຄຣິສຕຽນຂອງທ່ານ.

1. <u>ຮູ້ຈັກແຫລ່ງທີ່ມາຂອງຄວາມເຊື່ອໝັ້ນ:</u> (ເຮັບເຣີ 10:19-23)

- ຂໍໃຫ້ນັກຮຽນອາສາສມັກອ່ານ (ເຮັບເຣີ 10:19-23)
- ແມ່ນຫຍັງແດ່ທີ່ຄຣິສຕຽນຄວນຈະເຮັດ ແລະເວົ້າເພື່ອສະແດງເຖິງຄວາມເຊື່ອໝັ້ນ? ຂຽນຄໍາຕອບໃສ່ກະດານ, ທີ່ສະແດງອອກເຖິງຜູ້ທີ່ຕິດຕາມພຣະຄຣິດທີ່ມີຄວາມເຊື່ອໝັ້ນທັງການເປັນພຍານ ແລະການນະມັສການພຣະເຈົ້າ.
- ຈັດນັກຮຽນຕົວຢ່າງ ສາມ ຫລື ສີ່ກຸ່ມນ້ອຍໆ. ໃຫ້ເຂົາເຈົ້າຄິດເຖິງເວລາໃດທີ່ເຂົາເຈົ້າຮູ້ສຶກວ່າຕົນມີຄວາມເຊື່ອໝັ້ນ. ໃຫ້ຖາມວ່າເວລານັ້ນເຂົາເຈົ້າໄດ້ເຮັດຫຍັງແດ່? ເຂົາເຈົ້າໄດ້ຢູ່ກັບໃຜ? ດ້ວຍເຫດໃດເຂົາເຈົ້າຈຶ່ງມີຄວາມຮູ້ສຶກໝັ້ນໃຈ? ເຂົາເຈົ້າໄດ້ເຊື່ອໝັ້ນໃນຕົນເອງ ຫລືວ່າເຊື່ອໝັ້ນໃນຄົນອື່ນ ຫລື ສິ່ງອື່ນ? ໃຫ້ເຫດຜົນສໍາລັບການເຂົ້າເຖິງພຣະເຈົ້າດ້ວຍຄວາມເຊື່ອໝັ້ນ. ອັນໃດທີ່ພາໃຫ້ຜູ້ທີ່ເຊື່ອຍຶດໝັ້ນໃນເຂົ້າຫາພຣະເຈົ້າຢ່າງໝັ້ນໃຈໄດ້?
- ຂໍ້ສລຸບສັ້ນໆ ໂດຍຊີ້ໃຫ້ພວກເຮົາເຫັນເຖິງການທີ່ພວກເຮົາເຂົ້າເຖິງພຣະເຈົ້າດ້ວຍການອະທິຖານ ແລະການນະມັສການໂດຍຖ່ອມໃຈ, ແຕ່ແຫລ່ງຂອງຄວາມເຊື່ອໄວ້ວາງໃຈຢູ່ທີ່ພຣະເຢຊູໄດ້ຊົງຖວາຍພຣະອົງເອງເພື່ອພວກເຮົາທັງງຫລາຍ. ເປັນການຊໍາລະລ້າງແທນການທໍາພິທີຕ່າງງໆ, ພວກເຮົາຄວນເຂົ້າຫາພຣະເຈົ້າດ້ວຍໃຈບໍຣິສຸຂາວສະອາດ, ເພາະວ່າພວກເຮົາໄດ້ສາຣະພາບບາບຂອງພວກເຮົາຕໍ່ພຣະເຈົ້າກ່ອນແລ້ວ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 10:19-23)

1. ອັນໃດເປັນການສເນີໃຫ້ຂໍ້ມູນຂອງຜູ້ຂຽນ ໃນເມື່ອລາວເວົ້າວ່າ: ພວກເຮົາທັງຫລາຍມີຄວາມກ້າຫານທີ່ຈະເຂົ້າໄປໃນສະຖານທີ່ສັກສິດ " ຜ່ານທາງພຣະໂລຫິດຂອງພຣະຄຣິດ "?
2. ຜ້າກັ້ງນັ້ນຜູ້ຂຽນໄດ້ອ້າງເຖິງຫຍັງ?
3. ແມ່ນໃຜເປັນຜູ້ແຕ່ງຕັ້ງພຣະຜູ້ຍິ່ງໃຫຍ່ຂອງພວກເຮົາ?
4. ເຮັດແນວໃດພວກເຮົາຈຶ່ງຈະເຂົ້າໃກ້ພຣະເຈົ້າໄດ້?

2. <u>ໃຫ້ຢູ່ໃນຄຣິສຕະຈັກ:</u> (ເຮັບເຣີ 10:24-25)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະທັມ ເຮັບເຣີ 10:24-25
- ໃຫ້ນັກຮຽນບອກທ່ານເຖິງເຣື່ອງການຢູ່ໃນໂບດນັ້ນເພາະເຫດອັນໃດ? ນໍາພານັກຮຽນເວົ້າເຖິງຂໍ້ແກ້ຕົວຂອງຄົນທີ່ບໍ່ຢາກໄປໂບດ ແລ້ວໃຫ້ນັກຮຽນເວົ້າເຖິງບັນຫາຊີວິດຂອງຄົນເຫລົ່ານັ້ນທີ່ເຂົາເຈົ້າຊັກຊວນແນະນໍາໃຫ້ໄປໂບດເປັນປະຈໍາ ແລ້ວຄົນນັ້ນຈະຕອບວ່າແນວໃດ. ບອກເຂົາເຈົ້າໃຫ້ພິຈາຣະນາເບິ່ງຄໍາຕອບໃນພຣະທັມເຮັບເຣີ 10:24-25. ໃຊ້ຂໍ້ອື່ນມາສນັບສນຸນ ໃຫ້ແຕ່ລະຄົນແບ່ງປັນກ່ຽວກັບບັນຫາແຫ່ງຊີວິດເພື່ອປັບປຸງ ແກ້ໄຂ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 10:24-25)

1. ເປັນດ້ວຍເຫດໃດຈຶ່ງໃຫ້ຜູ້ທີ່ເຊື່ອທັງຫລາຍເອົາໃຈໃສ່ຊຶ່ງກັນ ແລະກັນ?
2. ເປັນຫຍັງຄຣິສຕຽນຈຶ່ງຈໍາເປັນຕ້ອງໄປໂບດເພື່ອໜູນໃຈຊຶ່ງກັນ ແລະກັນ?

3. <u>ຖືວ່າບາບນັ້ນໂຫດຮ້າຍ:</u>  (ເຮັບເຣີ 10:26-29)

- ຄຳຖາມ: ແມ່ນຫຍັງທີ່ບົ່ງບອກໃຫ້ທ່ານເຫັນວ່າມີຄຣິສຕຽນບາງຄົນເອີ້ນເຂົາເຈົ້າເອງວ່າເປັນຄຣິສຕຽນທີ່ບໍ່ເປັນຄົນຜິດບາບອີກແລ້ວ?
- ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ເຮັບເຣີ 10:26-29
- ໃຫ້ນັກຮຽນຂຽນທົ້ນທາງໃນການຫລົ້ນກິນທີ່ໄຮ້ປໂຍດຂອງສັງຄົມຝ່າຍໂລກທີ່ຕິດພັນຢູ່ກັບຄວາມໂຫດຮ້າຍຂອງຄວາມບາບ, ແລ້ວພວກເຮົາຈະທຳການຢ່າງໃດເພື່ອຈະໃຫ້ທັສນະຂອງສັງຄົມຫັນປ່ຽນໄດ້?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>  (ເຮັບເຣີ 10:2-29)
1. ອັນໃດທີ່ເປັນແບບຢ່າງຂອງການເຮັດຜິດບາບໃນສມັຍນີ້?
2. ທ່ານຈະປຽບທຽບການແກ້ຜິດບາບໃນສມັຍພຣະຄັມພີເດີມ ກັບໂອກາດທີ່ຊອກຫາການໃຫ້ອະພັຍໃນພຣະຄັມພີໃໝ່ແນວໃດ?
3. ເປັນຫຍັງຈຶ່ງວ່າ ການດຳເນີນຢູ່ໃນຄວາມຜິດບາບຈຶ່ງເປັນການດູໝິ່ນພຣະເຈົ້າ?
4. ບົດບາດທ່າທີໃນຄຣິສຕະຈັກໄດ້ມີການໝູນຈິດໃຈບໍ່ໃຫ້ຜູ້ທີ່ເຊື່ອທັງຫລາຍເຮັດຜິດບາບແນວໃດແດ່?

4. <u>ຈື່ຈຳຊັຍຊະນະທີ່ຜ່ານມາ:</u>  (ເຮັບເຣີ 10:32-36

- ໃຫ້ນັກຮຽນອາສາສມັກອ່ານພຣະທັມ ເຮັບເຣີ 10:32-36
- ຂໍໃຫ້ນັກຮຽນເວົ້າເຣື່ອງເວລາທີ່ເຂົາເຈົ້າປະສົບກັບຊັຍຊະນະ ຫລືຜູ້ທີ່ເຂົາເຈົ້າຮູ້ຈັກຄຣິສຕຽນຄົນໃດຄົນນຶ່ງທີ່ໄດ້ຊັຍຊະນະດ້ວຍຄວາມເຊື່ອທີ່ຜ່ານພົ້ນຄວາມລຳບາກຍາກແຄ້ນດ້ວຍບັນຫາຕ່າງໆນັ້ນເພາະພຣະວິນຍານບໍຣິສຸດຊົງນຳພາ. ບັນຫາຕ່າງໆເຫລົ່ານັ້ນອາດເປັນອັນຕະລາຍແກ່ການທຳງານ ຫລືຄອບຄົວ,ດູຖູກດູໝິ່ນ, ການກ່າວຫາ ຫລືການຫາເຣື່ອງ, ການກ່າວໂທດ ແລະອື່ນໆ.....

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>
1. ການກ່າວຫາຊຶ່ງຜູ້ທີ່ເຊື່ອປະເຊີນຢູ່ໃນປະຈຸບັນນີ້ມີອັນໃດແດ່?
2. ທ່ານຈະໃຫ້ຄຳປຶກສາແກ່ຜູ້ທີ່ຫົວເລາະເຢາະເຢີ້ຍທ່ານໃຫ້ຍືນໝັ້ນຢູ່ໃນຄວາມເຊື່ອໄດ້ຢ່າງໃດ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ເພາະພຣະຄຣິດ ແລະມີແຕ່ພຣະຄິດເທົ່ານັ້ນ, ທີ່ຜູ້ເຊື່ອທັງຫລາຍສາມາດໄປເຖິງພຣະເຈົ້າດ້ວຍຄວາມເຊື່ອໝັ້ນໃຈໄດ້.
- ການນະມັສການຮ່ວມກັບຄຣິສສຕຽນຄົນອື່ນໆເຮັດໃຫ້ຜູ້ເຊື່ອທັງຫລາຍເຂັ້ມແຂງຂຶ້ນໃນຄວາມສັມພັນກັບພຣະເຈົ້າ.
- ຄວາມບາບທຳລາຍການເຊື່ອໝັ້ນໃນພຣະເຈົ້າ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )